# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 24 ຕຸລາ 2021 (10-24-2021)

---

## ຄວາມໝັ້ນໃຈໃນເມື່ອຜະເຊີນໜ້າກັບຄວາມຢ້ານກົວ

*ແມ່ນຫຍັງເປັນສິ່ງທີ່ຄົນອື່ນອາດຢ້ານກົວ ຊຶ່ງເປັນເຫດໃຫ້ທ່ານບໍ່ຢ້ານຈັກໜ້ອຍເລີຍ?*

**ຈຸດສຳຄັນໃນບົດຮຽນ:** ຈົ່ງໄວ້ວາງໃຈໃນພຣະເຈົ້າເມື່ອທ່ານຖືກຖ້ວມລົ້ນໄປດ້ວຍຄວາມຢ້ານກົວ.

**ພຣະຄັມພີຕອບສນອງຕໍ່ຊີວິດ: ຄວາມຢ້ານກົວ.** ເຖິງແມ່ນວ່າພວກເຮົາຢາກຈະຍອມຮັບມັນຫຼືບໍ່ກໍຕາມ, ຄວາມຢ້ານກົວແມ່ນສິ່ງທີ່ພວກເຮົາທັງໝົດຕ້ອງຕໍ່ສູ້ ດີ້ນຮົນກັບມັນ:

- ຄວາມຢ້ານກົວໃນການຢືນຢູ່ເທິງຂັ້ນໄດລະດັບສູງ.
- ຄວາມຢ້ານກົວທີ່ແມງມຸມໄຕ່ຢູ່ເທິງໜັງ (ແຂນ, ຂາ, ໜ້າເອິກ ເປັນຕົ້ນ)
- ຄວາມຢ້ານກົວໃນການຢືນຢູ່ເທິງເວທີການສະແດງ ໂດຍແສງສະປອທໄລ(spotlight)ເຍືອງມາຍັງທ່ານ.
- ຄວາມຢ້ານກົວໃນການເຈັບປ່ວຍ (ຕົວຢ່າງໂຣຄ COVID-19).
- ຄວາມຢ້ານກົວໃນການເສັຽວຽກເສັຽງານ (ຕົກງານ, ຖືກໄລ່ອອກ ດັ່ງນີ້ເປັນຕົ້ນ).
- ຄວາມຢ້ານກົວໃນສິ່ງໃດສິ່ງນຶ່ງ ເກີດຂຶ້ນກັບລູກ, ກັບຫຼານ ຄົນໃດຄົນນຶ່ງ.
- ຄວາມຢ້ານກົວໃນຄວາມໂດດດ່ຽວປ່ຽວເອກາ (ຢູ່ພຽງລຳພັງຄົນດຽວ).
- ຄວາມຢ້ານກົວໃນຄວາມຕາຍ ແລະຄວາມບໍ່ແນ່ໃຈວ່າຈະມີຫຍັງເກີດຂຶ້ນ? ຫຼັງຈາກຕາຍຈາກໂລກນີ້ໄປແລ້ວ.

ໃນຂນະທີ່ຄວາມຢ້ານກົວບາງຢ່າງເບິ່ງຄືເລັກນ້ອຍ, ຄວາມຢ້ານກົວທຸກຢ່າງ(ທຸກປະເພດ)ກໍສາມາດເຮັດໃຫ້ເກີດຜົນກະທົບໄດ້. ຄວາມນຶກຄິດແລະຮ່າງກາຍຂອງພວກເຮົາສາມາດຖືກຍຶດເອົາໄປໄດ້, ຈົນກັບກາຍເກືອບເຖິງພິການໄປ. ພວກເຮົາຈະເຮັດແນວໃດໃນເມື່ອຄວາມຢ້ານກົວເລັກໆນ້ອຍໆ ທີ່ໜ້າກຽດຊັງຄືບຄານເຂົ້າມາສູ່ຊີວິດຂອງພວກເຮົາ? ຕົວຢ່າງນຶ່ງຈາກຊີວິດຂອງອັບຣາມ ສະແດງໃຫ້ພວກເຮົາໄດ້ເຫັນວ່າ: **ພວກເຮົາສົມຄວນຈະເຮັດແນວໃດ ແລະ ສິ່ງໃດທີ່ພວກເຮົາບໍ່ສົມຄວນເຮັດຢ່າງແນ່ນອນ.**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ປະຖົມມະການ 12:10-13

*10 ໃນເວລານັ້ນ ມີການອຶດຢາກຢ່າງແສນສາຫັດເກີດຂຶ້ນໃນປະເທດການາອານ ຈຶ່ງເປັນເຫດໃຫ້ອັບຣາມຕ້ອງໄປອາໄສຢູ່ໃນ
ປະເທດເອຢິບຊົ່ວລະຍະນຶ່ງ. 11 ເມື່ອໃກ້ຈະຮອດດ່ານເຂົ້າປະເທດ ເພິ່ນຈຶ່ງເວົ້າກັບເມັຽວ່າ "ຊາຣາຍເຈົ້າເປັນຍິງທີ່ຈົບງາມ. 12
ເມື່ອຊາວເອຢິບເຫັນເຈົ້າ ພວກເຂົາຄົງຈະເວົ້າວ່າເຈົ້າເປັນເມັຽຂອງຂ້ອຍ ແລ້ວພວກເຂົາກໍຈະຂ້າຂ້ອຍຖິ້ມເພື່ອຈະເອົາເຈົ້າໄປ.
13 ດັ່ງນັ້ນເພື່ອເວັ້ນຈາກສິ່ງນີ້ ຂໍໃຫ້ເຈົ້າບອກກັບເຂົາວ່າ ເຈົ້າເປັນນ້ອງສາວຂອງຂ້ອຍ ເພື່ອວ່າພວກເຂົາຈະບໍ່ຂ້າຂ້ອຍ ແລະ
ຈະປະຕິບັດຕໍ່ຂ້ອຍເປັນຢ່າງດີ."*

ຄວາມອຶດຢາກຍິ່ງໃຫຍ່ໄດ້ແຜ່ກະຈາຍໄປທົ່ວແຜ່ນດິນການາອານ. ພຣະເຈົ້າໄດ້ຊົງຮຽກເອີ້ນອັບຣາມໃຫ້ໄປຍັງການາອານ ແລະຊົງໄດ້ກະທຳພັນທະສັນຍາກັບລາວໂດຍໄດ້ຊົງປະທານດິນແດນແລະເຊື້ອສາຍລູກຫຼານແກ່ລາວ: ດ້ວຍເຫດວ່າຄວາມອຶດຢາກແສນສາຫັດ, ແນວໃດກໍຕາມ, ຄວາມຢ້ານກົວໄດ້ກະໂດດເຂົ້າມາ ແລະອັບຣາມໄດ້ຕັດສິນໃຈຍົກຍ້າຍຄອບຄົວໄປຍັງເອຢິບ. ບາງຄົນອາດຈະເວົ້າວ່າສັນຊາດຍານ(instinct)ຄວາມຢູ່ລອດຂອງອັບຣາມອາດຈະທຳໃຫ້ລາວເຮັດໃນສິ່ງທີ່ລາວຄິດວ່າສລາດ, ແຕ່ວ່າຂໍໃຫ້ເອີ້ນມັນໃນສິ່ງທີ່ມັນເປັນຄື: **ຄວາມຢ້ານກົວ**. ນັບຕັ້ງແຕ່ພຣະເຈົ້າຊົງໄດ້ຮຽກເອີ້ນອັບຣາມສູ່ການາອານ, ແນ່ນອນພຣະເຈົ້າຈະຊົງເບິ່ງແຍງລາວໃນການາອານ, ແຕ່ຄວາມຢ້ານກົວແລະຄວາມບໍ່ແນ່ນອນໄດ້ພາໃຫ້ອັບຣາມນຳພາຄອບຄົວໄປອາສັຍຢູ່ເອຢິບ.

ຂນະທີ່ອັບຣາມໄກ້ຈະເຖິງປະເທດເອຢິບ, ຄວາມຄິດຂອງລາວກໍໄດ້ເລີ່ມຢ້ານ. ລາວໄດ້ເລີ່ມຄິດເຫັນສະຖານະການທີ່ອາດຈະເກີດຂຶ້ນກັບລາວແລະຄອບຄົວ. ໃນເອຢິບພວກເຂົາເປັນພຽງນັກທ່ອງທ່ຽວ, ຄົນຕ່າງດ້າວທີ່ບໍ່ມີສິດເສລີພາບແລະບໍ່ມີຄວາມປອດພັຍ. ອັບຣາມໄດ້ໜີຈາກຄວາມອຶດຢາກໃນຄວາມຢ້ານກົວ, ແຕ່ເບິ່ງເໝືອນວ່າລາວແລກປ່ຽນຄວາມຢ້ານກົວຕໍ່ຄວາມອຶດຢາກນັ້ນກັບຄວາມຢ້ານການກົດຂີ່ຂົ່ມເຫງຊຶ່ງຈະມີມາຈາກຊາວເອຢິບ. ນີ້ຄົງຈະບໍ່ເຮັດໃຫ້ພວກເຮົາແປກໃຈເລີຍ ດ້ວຍເຫດວ່າຄວາມຢ້ານກົວມີຄວາມສາມາດໃນການລົດການຕັດສິນໃຈທີ່ມີເຫດຜົນຂອງພວກເຮົາ. ຄວາມຢ້ານກົວຂອງອັບຣາມເຮັດໃຫ້ລາວຕ້ອງມອບຕົວນາງຊາຣາຍເມັຽທີ່ສວຍງາມຂອງລາວໃຫ້ກັບກະສັດຟາຣາໂອຂອງເອຢິບ ເພື່ອວ່າຊີວິດຂອງລາວເອງຈະໄດ້ລອດຕາຍ.

*ແມ່ນຫຍັງເປັນສະຖານະການຊຶ່ງສາມາດເຮັດໃຫ້ພວກເຮົາຢ້ານກົວແທນທີ່ຈະວາງໃຈເຊື່ອໃນພຣະເຈົ້າ?*

ມີທາງທີ່ດີກວ່ານັ້ນທີ່ຈະຈັດການກັບຄວາມຢ້ານກົວ. ອັຄສາວົກເປໂຕແລະອັຄສາວົກອື່ນໆໄດ້ຢູ່ໃນເຮືອໃນຂນະທີ່ລົມພະຍຸກະໜ່ຳແລະເຮືອເລີ້ມຈົມລົງໃນຄື້ນທະເລ. ໃນຄວາມປລາດໃຈຂອງເຂົາເຈົ້າ, ພຣະເຢຊູຊົງມາຫາພວກເຂົາເຈົ້າໂດຍການຊົງຍ່າງເທິງນໍ້າ. ເປໂຕໄດ້ ມີຄວາມກ້າຫານໃນການຮ້ອງຂໍໃຫ້ພຣະອົງຊົງສັ່ງໃຫ້ລາວຍ່າງເທິງນ້ຳໄປຫາພຣະອົງ. <u>ໂດຍພຣະດຳຣັດ</u>, <u>ເປໂຕກໍ່ໄດ້ເຮັດດັ່ງນັ້ນ</u>! (ຍ່າງເທິງນໍ້າ). <u>ແຕ່ໃນເມື່ອເປໂຕໄດ້ເບິ່ງຮອບໆຕົວເອງແລະເອົາໃຈຈົດຈໍ່ອອກຈາກພຣະເຢຊູ,</u> <u>ຄວາມຢ້ານກົວກໍເຂົ້າມາແທນທີ່</u>, <u>ແລ້ວເລີ້ມຕົ້ນຈົມລົງ</u> (ມທ 14:22-23).

ຄວາມຢ້ານກົວແລະຄວາມບໍ່ແນ່ນອນໂຈມຕີພວກເຮົາທັງໝົດ. ໃນຂນະນັ້ນ, ພວກເຮົາຈຳເປັນຕ້ອງຈົດຈຳໃນສິ່ງທີ່ອັບຣາມໄດ້ຫຼົງລືມໄປຄື: <u>ພຣະເຈົ້າຊົງສະຖິດຢູ່ນຳພວກເຮົາ ແລະ ພຣະອົງຈະຊົງດູແລເບິ່ງແຍງພວກເຮົາ.</u> ໃນຊ່ວງເວລາເຫຼົ່ານັ້ນ, ພວກເຮົາ**<u>ຕ້ອງ</u>**ເອົາຈຸດສົນໃຈຂອງພວກເຮົາອອກຈາກຄວາມຢ້ານກົວ ແລະ ແທນທີ່, ພວກເຮົາຈຳເປັນ**<u>ຕ້ອງມີໃຈຈົດຈໍ່ຕໍ່ພຣະເຈົ້າອົງພຣະບິດາ</u>**. ໂຜດໃຫ້ຂ້າພະເຈົ້າເວົ້າອີກຢ່າງນຶ່ງຄື: *<u>ຈົ່ງປ່ຽນຄວາມວິຕົກກັງວົນຂອງພວກທ່ານໃຫ້ກາຍເປັນການນະມັສການ</u>*. ເຫດຜົນທັງຫຼາຍຂອງຄວາມຢ້ານກົວຈະມີຢູ່ສເມີໄປ, ແຕ່ວ່າພວກເຮົາມີເຫດຜົນຫຼາຍກວ່າທີ່ຈະນະມັສການພຣະເຈົ້າ. ເມື່ອພວກເຮົາປ່ຽນຄວາມວິຕົກກັງວົນຂອງພວກເຮົາໄປນະມັສການແລະນຳຄວາມຢ້ານກົວໄປສູ່ພຣະເຈົ້າອົງພຣະບິດາ, ທັດສະນະ(ມຸມມອງ)ຂອງພວກເຮົາຈະແຈ້ງຂຶ້ນ.

## 2. <u>ປະຖົມມະການ 12:17-20</u>

*17 ພຣະຜູ້ເປັນເຈົ້າຊົງເຮັດໃຫ້ກະສັດຟາຣາໂອ ແລະຄົນໃນພະລາດຊະວັງເຈັບໄຊ້ຢ່າງຮ້າຍແຮງ ກໍຍ້ອນວ່າພຣະອົງໄດ້ຮັບ*
*ເອົານາງຊາຣາຍເມັຽຂອງອັບຣາມ ມາຢູ່ໃນພະລາດຊະວັງ. 18 ສະນັ້ນ ກະສັດຟາຣາໂອຈຶ່ງເອີ້ນອັບຣາມມາແລ້ວຖາມເພິ່ນວ່າ,*
*“ເປັນຫຍັງເຈົ້າຈຶ່ງເຮັດດັ່ງນີ້? ເປັນຫຍັງຈຶ່ງບໍ່ບອກວ່ານາງເປັນເມັຽຂອງເຈົ້າ? 19 ເປັນຫຍັງຈຶ່ງເວົ້າວ່າເປັນນ້ອງສາວ? ຍ້ອນ*

*ຈັ່ງຊັ້ນແຫຼະ ເຮົາຈຶ່ງເອົາລາວມາເປັນເມັຽ ນີ້ລາວຢູ່ນີ້ ໃຫ້ເອົາລາວຄືນໄປເສັຽ.”* [20] *ຄັນແລ້ວ ກະສັດຟາຣາໂອໄດ້ສັ່ງໃຫ້ຂ້າ-ລາດຊະການຂອງພະອົງ ພາອັບຣາມເອົາເມັຽແລະສິ່ງຂອງອອກຈາກປະເທດໄປ.*

ໃນເມື່ອອັບຣາມໄດ້ມາຮອດປະເທດເອຢິບ, ຄວາມງາມຂອງຊາລາຍພັລຍາຂອງລາວໄດ້ຮັບຄວາມສົນໃຈຂອງເຈົ້າໜ້າທີ່ທີ່ພະລາດຊະວັງ. ຊາລາຍຍິນດີເຮັດຕາມແຜນການຂອງສາມີຂອງນາງ. ເຈົ້າໜ້າທີ່ພະລາດຊະວັງຈຶ່ງຟ້າວຮີບໄປບອກຂ່າວແກ່ກະສັດຟາຣາໂອວ່າມີຍິງງາມຄົນນຶ່ງມາປາກົດໃນດິນແດນຂອງພະອົງ. ກະສັດຟາຣາໂອຈຶ່ງໄດ້ອອກຄຳສັ່ງໃຫ້ນຳຕົວຊາລາຍໃຫ້ເຂົ້າພົບ. ເພື່ອເປັນການແລກປ່ຽນສຳລັບຊາລາຍ, ກະສັດຟາຣາໂອໄດ້ມອບຂອງຂວັນອັນລ້ຳຄ່າຫຼາຍຢ່າງແກ່ອັບຣາມ.

ເພື່ອນຳມາຊຶ່ງຄວາມຈິງອີກປະການນຶ່ງ: <u>ຄວາມຢ້ານກົວບໍ່ພຽງແຕ່ເຮັດໃຫ້ຄວາມເຊື່ອຂອງພວກເຮົາລົດນ້ອຍຖອຍລົງເທົ່ານັ້ນ</u>, <u>ມັນສາມາດມີຜົນສະທ້ອນໃນຄວາມເຊື່ອຂອງບັນດາຜູ້ທີ່ຢູ່ອ້ອມຮອບພວກເຮົາ</u>. ໂດຍອາສັຍສະຖານະການຂອງລາວແທນທີ່ຈະເຮັດໃຫ້ລາວໝັ້ນໃຈໃນພຣະສັນຍາຂອງພຣະເຈົ້າ, ອັບຣາມສົ່ງຜົນກະທົບຕໍ່ຄວາມເຊື່ອຂອງຊາລາຍແລະ <u>**ຍັງບັງຄັບໃຫ້ນາງຕົວະ**</u>.

ຄຳຕົວະທີ່ເກີດຈາກຄວາມຢ້ານກົວຂອງອັບຣາມຍັງໄດ້ສົ່ງຜົນກະທົບກະເທືອນຕໍ່ກະສັດຟາຣາໂອແລະຄອບຄົວທັງໝົດຂອງເພິ່ນເຊັ່ນດຽວກັນ. ບັນດາປະຊາຊົນຜູ້ບໍ່ມີຄວາມຜິດທີ່ບໍ່ຮູ້ວ່າແມ່ນຫຍັງໄດ້ເກີດຂຶ້ນ ກໍໄດ້ຮັບຜົນກະທົບ. ມັນເປັນເຣື່ອງຍາກຫົວແທ້ໆທີ່ພວກເຮົາເຫັນກະສັດຟາຣາໂອຜູ້ນອກຮີດຄອງ(ບໍ່ມີສາສນາ)ເອີ້ນຫາອັບຣາຣາມ”ປູ່ຍ່າຕາຍາຍຜູ້ສັດຊື່”. ມັນຊ່າງເປັນການຖ່ອມຕົວແທ້ໆທີ່ອັບຣາມໄດ້ຮັບບົດຮຽນທາງສິນທັມອັນລ້ຳຄ່າຈາກກະສັດຟາຣາໂອນອກຮີດຄອງ(ຄົນນອກສາສນາ)!

ອັບຣາມອາດຈະໄດ້ເປັນອິດທິພົນອັນຍິ່ງໃຫຍ່ໃນບັນດາຊາວເອຢິບ, ຊີ້ໃຫ້ພວກເຂົາເຈົ້າອອກຫ່າງໄກຈາກຮູບເຄົາລົບຂອງເຂົາເຈົ້າໄປຫາພຣະເຈົ້າຫ່ຽງແທ້ພຣະອົງດຽວ. ແຕ່ໂອກາດທີ່ອັບຣາມຈະໃຊ້ຄວາມເປັນຜູ້ນຳໃດໆກໍໄດ້ຖືກທຳລາຍລົງດ້ວຍຄວາມຢ້ານກົວແລະການຂາດຄວາມເຊື່ອຂອງລາວ. ລະດັບຂອງຄວາມຢ້ານກົວແລະຄວາມເຊື່ອຂອງພວກເຮົາໃນມື້ນີ້ສາມາດສົ່ງຜົນກະທົບຕໍ່ຄົນອື່ນທັງທາງດ້ານດີ-ຫຼືດ້ານຊົ່ວ. ຄວາມຢ້ານກົວແລະຄວາມເຊື່ອແມ່ນທັງສອງເປັນໂຣກຕິດຕໍ່(ຕິດແປດ)ກັນສູງ. ເມື່ອຄວາມວຸ້ນວາຍຫຼືບັນຫາເກີດຂຶ້ນ, ຫຼືເມື່ອພວກເຮົາມີໂອກາດນຳພາ ຫຼື ມີອິດທິພົນຕໍ່ບັນດາຄົນອື່ນໆ, <u>ພວກເຮົາຄວນພິຈາລະນາວ່າທັສນະຄະຕິແລະການກະທຳຂອງພວກເຮົາຈະມີຜົນກະທົບຕໍ່ພວກເຂົາເຈົ້າແນວໃດ</u>.

*ສັດຕູໃຊ້ຄວາມຢ້ານກົວເພື່ອສ້າງຄວາມຫາຍຍະນະໃນຊີວິດຂອງພວກເຮົາແນວໃດ?*

## 3. <u>ປະຖົມມະການ 13:1-4</u>

[1] *ອັບຣາມພາເມັຽກັບສິ່ງຂອງທີ່ເພິ່ນມີ ມຸ່ງໜ້າອອກຈາກປະເທດເອຢິບໄປສູ່ເຂດເນເກັບ. ໂລດກໍຕິດຕາມເພິ່ນໄປດ້ວຍ.* [2]
*ອັບຣາມເປັນຄົນຮັ່ງມີ ເພິ່ນມີຝູງແກະ ຝູງແບ້ ແລະຝູງງົວຄວາຍ ພ້ອມທັງເງິນຄຳມາກຫລາຍ.* [3] *ເພິ່ນຍົກຍ້າຍຈາກເຂດເນ
ເກັບໄປສູ່ເມືອງເບັດເອນເປັນ ລະຍະໆ ຈົນເຖິງບ່ອນຊຶ່ງເພິ່ນໄດ້ຕັ້ງທີ່ພັກມາແຕ່ກ່ອນ ຢູ່ລະຫວ່າງເມືອງເບັດເອນກັບເມືອງ
ອາອີ.* [4] *ເພິ່ນໄດ້ກັບຄືນໄປບ່ອນທີ່ເພິ່ນໄດ້ສ້າງແທ່ນບູຊາໄວ້ແຕ່ກ່ອນແລ້ວ ແລະໄດ້ນະມັສການພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ.*

ຫລັງຈາກກະສັດຟາຣາໂອໄດ້ດຳຣັດສັ່ງໃຫ້ອອກຈາກເອຢິບ, ອັບຣາມໄດ້ນຳພັລຍາຊາລາຍ, ຄອບຄົວ, ແລະຊັບສົມບັດສິ່ງຂອງທັງໝົດ ແລ້ວມຸ່ງໜ້າກັບຄືນສູ່ການາອານ. ໄດ້ມີຫຍັງເກີດຂຶ້ນໃນຈິດໃຈຂອງອັບຣາມ? ໃນຂນະທີ່ລາວເດີນທາງຜ່ານທະເລຊາຍອັນແຫ້ງແລ້ງຂອງເນເກັບ ຫຼັງຈາກການປຣາຊັຍພ່າຍແພ້ດ້ານຈິດວິນຍານ. ກໍຄາດຄະເນວ່າລາວຄົງຈະມີຄວາມຮູ້ສຶກບໍ່ໝັ້ນຄົງໃນຈິດໃຈ ແລະຮູ້ສຶກຄວາມຜິດໃນຄວາມລົ້ມເຫຼວຂອງລາວ.

*ມີອຸປສັກອັນໃດແດ່ທີ່ພວກເຮົາປະເຊີນໜ້າຢູ່ທີ່ບໍ່ໃຫ້ເຮົາກັບຫາພຣະເຈົ້າຫຼັງຈາກລົ້ມເຫຼວແລ້ວ?*

ເບິ່ງຄືວ່າອັບຣາມລືມຄຳສັນຍາຂອງພຣະເຈົ້າເມື່ອລາວມີຄວາມຮູ້ສຶກຖືກຄຸກຄາມ, ແຕ່ມັນເປັນຄວາມຈິງສຳລັບພວກເຮົາສ່ວນຫຼາຍ. ພວກເຮົາມີຄວາມສົງໃສໃນພຣະສັນຍາຂອງພະເຈົ້າຢ່າງວ່ອງໄວ ແລະຮ້ອງຫາຊີວິດຂອງພວກເຮົາໃນສະຖານະການທີ່ເປັນຕາຢ້ານ. ແຕ່ໜ້າເສັ້ງດາຍ, ທີ່ວ່າເມື່ອພວກເຮົາປະເຊີນໜ້າກັບຄວາມລົ້ມເຫຼວຂອງພວກເຮົາ, ພວກເຮົາມັກຄິດວ່າພຣະເຈົ້າບໍ່ຊົງສາມາດໃຊ້ພວກເຮົາເພື່ອທຳພັນທະກິຈຂອງພຣະອົງໄດ້ອີກຕໍ່ໄປ. ໃນຊ່ວງເວລານັ້ນ, ພວກເຮົາຕ້ອງຈົດຈຳໄວ້ວ່າ: **<u>ເຖິງແມ່ນວ່າພວກເຮົາບໍ່ສັດຊື່</u>, <u>ແຕ່ພຣະອົງຍັງຊົງສັດຊື່ຕະລອດໄປ</u>.**

ໃນຂະນະທີ່ພວກເຮົາຮັບຮູ້ວ່າຄວາມຢ້ານກົວເຮັດໃຫ້ <u>ຄວາມເຊື່ອ</u> ແລະ <u>ຄວາມໝັ້ນໃຈ</u> ຂອງພວກເຮົາລົດລົງໃນພຣະຜູ້ເປັນເຈົ້າ, ຄວາມຢ້ານກົວຮູບແບບນຶ່ງເສີມສ້າງຄວາມເຊື່ອຂອງພວກເຮົາໃຫ້ເຂັ້ມແຂງ. ມັນແມ່ນຄວາມຢ້ານກົວທີ່ພວກເຮົາຈຳເປັນຕ້ອງເພີ້ມເຕີມຂຶ້ນ-ບໍ່ແມ່ນລົດລົງ-ໃນຊີວິດຂອງພວກເຮົາຄື: **<u>ຄວາມຢ້ານກົວທີ່ເຂັ້ມແຂງແລະ</u> <u>ຢຳເກງຕໍ່ອົງພຣະຜູ້ເປັນເຈົ້າ</u>. <u>ຍິ່ງພວກເຮົາມີຄວາມຢຳເກງຕໍ່ພຣະເຈົ້າຫຼາຍເທົ່າໃດ</u>, <u>ຄວາມເຊື່ອແລະຄວາມໄວ້ວາງໃຈຂອງພວກເຮົາໃນພຣະເມດຕາຂອງພຣະອົງຍິ່ງເພີ່ມຂຶ້ນຫຼາຍເທົ່ານັ້ນ</u>.** ໃນເມື່ອພວກເຮົາເຂົ້າໃຈໃນຄວາມເລິກຂອງພຣະອຳນາດ ແລະ ຂອງຄວາມສັກສິດຂອງພຣະເຈົ້າ, ພວກເຮົາກໍຈະກັບກາຍມາເປັນຄົນທີ່ມີຄວາມໝັ້ນໃຈຫຼາຍຂຶ້ນ-ແລະພວກເຮົາຈະຖືກຖ້ວມລົ້ນດ້ວຍຄວາມສູງແຫ່ງພຣະເມດຕາ (ພຣະມະຫາກະຣຸນາທິຄຸນ) ທີ່ພວກເຮົາ<u>ບໍ່ສົມຄວນຈະໄດ້ຮັບ ທີ່ພຣະອົງຊົງປະທານແກ່ມະນຸດທັງປວງ</u>.

*ມີບາງວິທີທາງໃດແດ່ ທີ່ກຸ່ມຂອງພວກເຮົາສາມາດຊ່ວຍໃຫ້ເຮົາເອົາຊະນະຄວາມຢ້ານແລະຄວາມລົ້ມເຫຼວຂອງພວກເຮົາ?*

## ນຳໃຊ້ໃນຊີວິດ

ພວກເຮົາຈຳເປັນຕ້ອງໄວ້ວາງໃຈໃນພຣະເຈົ້າໃນເມື່ອພວກເຮົາຖ້ວມລົ້ນດ້ວຍຄວາມຢ້ານກົວ. ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງສະທ້ອນຄືນຫຼັງ.** ຈົ່ງສັດຊື່. ຈົ່ງໃຊ້ເວລາແລະຖາມຕົນເອງວ່າ: ລະດັບຂອງຄວາມເຊື່ອແລະລະດັບຂອງຄວາມຢ້ານກົວຂອງທ່ານໃຫ້ຜົນສະທ້ອນແກ່ທ່ານ ແລະແກ່ບັນດາຜູ້ທີ່ຢູ່ອ້ອມຮອບຕົວທ່ານໂດຍວິທີໃດ? ຈົ່ງລະບຸຄວາມຢ້ານກົວຈຳເພາະທີ່ທ່ານຈຳເປັນຕ້ອງຈົດຈໍ່ໃສ່ໃຫ້ນ້ອຍລົງ ແລ້ວປຸ່ງນໃຈຈົດຈໍ່ຕໍ່ພຣະບິດາ.
- **ຈົ່ງສາຣະພາບ.** ຈົ່ງພັກຜ່ອນບຶດນຶ່ງ ແລະປະເມີນຜົນຕົວເອງຖ້າຫາກມີ "ຄວາມຈິງພຽງເຄິ່ງດຽວ" ທີ່ທ່ານອາດຈະປິດບັງໂດຍສາເຫດແຫ່ງຄວາມຢ້ານກົວ. ຈົ່ງສາຣະພາບອັນນີ້. ຈົ່ງຈຳໄວ້ໃຫ້ດີ "ການ<u>ປິດບັງເຮັດໃຫ້ທ່ານບໍ່ຫາຍຈາກພະຍາດ</u>".
- **ຈົ່ງນະມັສການ.** ຈົ່ງຊອກຄົ້ນຫາໃນອິນເຕີແນັດ ລາຍຊື່ຕ່າງໆຂອງພຣະເຈົ້າຊຶ່ງມີຢູ່ໃນພຣະຄັມພີ. ຈົ່ງໃຊ້ເວລາໄຕ່ຕອງໃນແຕ່ລະຫົວຂໍ້. ຈົ່ງປ່ອຍໃຫ້ແຕ່ລະພຣະນາມຂອງພຣະເຈົ້າຊົງຊ່ອຍໃຫ້ທ່ານເຂົ້າໃຈຢ່າງເລິກເຊິ່ງ ແລະຈົ່ງຢຳເກງພຣະອົງ, ໃນຂະນະດຽວກັນຈົ່ງເພີ້ມເຕີມຄວາມເຊື່ອຂອງທ່ານໃນພຣະເມດຕາຂອງພຣະອົງ.

ຈຳນວນຂອງຄວາມຢ້ານກົວທີ່ພວກເຮົາກຳລັງຜະເຊີນໜ້າໃນຖານະທີ່ເປັນມະນຸດແມ່ນ**<u>ນັບບໍ່ຖ້ວນ</u>**. ແຕ່ຖ້າພວກເຮົາເລືອກເສັ້ນທາງແຫ່ງຄວາມເຊື່ອແທນທີ່, ພຣະເຈົ້າຈະຊົງຊ່ອຍພວກເຮົາເອົາຊະນະຄວາມຢ້ານກົວເຫຼົ່ານັ້ນ, **ດ້ວຍເຫດນີ້ ພວກເຮົາສາມາດຮັບໃຊ້ພຣະມະຫາກະຣຸນາທິຄຸນຂອງພຣະອົງໂດຍມີປະສິດທິພາບ.**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://lsbf.us/ **ແປໂດຍ SSK**